ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 157 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.09.2008

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2006-2010

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມດຳລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາ ວນກ, ສະບັບເລກທີ 42/ນຍ, ລົງວັນທີ 20 ເມສາ 2004.
- ອີງຕາມກອງປະຊຸມລັດຖະບານ ສະໄໝສາມັນຄັ້ງວັນທີ 20-21 ສິງຫາ 2007.
- ອີງຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1359/ອຄ.ຫສວ, ລົງວັນທີ 18 ສິງຫາ 2008

ນາຍົກລັດຖະມົນຕີອອກດຳລັດ:

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2006-2010.

ມາດຕາ 2: ມອບໃຫ້ຄະນະກຳມະການສົ່ງເສີມ ແລະ ພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜະລິດຕະພາບແຫ່ງຊາດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫລວງ, ແຂວງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ